# *ລາຍງານສະຫຼຸບສຳລັບຜູ້ບໍລິຫານ

ໃນເດືອນມັງກອນ 2010, ຫຼັງຈາກເກີດເຫດການຄວາມຮຸນແຮງທີ່ໂຮງຮຽນມັດທະຍົມປາຍເຊົາທ໌ ຟິລາເດເຟຍ ຕໍ່ກັບນັກຮຽນທີ່ເປັນຜູ້ອົບພະຍົບເຂົ້າເມືອງ ຊາວອາຊີ, ຄະນະກຳມາທິການດູແລດ້ານມະນຸດສຳພັນແຫ່ງຟິລາເດເຟຍ (Philadelphia Commission on Human Relations: PCHR) ໄດ້ເລີ້ມ ການພິຈາລະນາຄະດີ 11 ຄັ້ງຊຶ່ງກິນເວລາດົນນານເປັນປີໃນຖານະເປັນຂໍ້ບັງຄັບໜຶ່ງຂອງພວກເຮົາເພື່ອແກ້ໄຂບັນຫາຄວາມຂັດແຍ້ງ ລະຫວ່າງກຸ່ມທີ່ແຕກຕ່າງກັນ ແລະເພື່ອເປັນການອ້າງເຖິງການຈຳແນກທີ່ມີພື້ນຖານຈາກ ເຊື້ອຊາດ, ສີຜິວ, ເພດ, ຄວາມເອນອຽງທາງເພດ, ເອກະລັກທາງເພດ, ສາສະໜາ, ຊາດກຳເນີດ, ບັນພະບຸລຸດ, ອາຍຸ, ຄວາມພິການ, ສະຖານະການແຕ່ງງານ, ຫຼື ແຫຼ່ງລາຍໄດ້. ເປົ້າໝາຍແມ່ນເພື່ອຮັບຟັງເລື່ອງໂດຍກົງຈາກພໍ່ແມ່, ຄຣູ, ນັກຮຽນ, ຄຣູໃຫຍ່, ແລະ ສະມາຊິກໃນຊຸມຊົນອື່ນໆ ກ່ຽວກັບປະສົບການຂອງເຂົາເຈົ້າໃນເລື່ອງຄວາມຂັດແຍ້ງລະຫວ່າງກຸ່ມ ທີ່ແຕກຕ່າງກັນໃນໂຮງຮຽນຣັຖຟິລາເດເຟຍ. ຄວາມເຂົ້າໃຈຂອງຄະນະກຳມາທິການໃນເລື່ອງຄວາມຂັດແຍ້ງ ລະຫວ່າງກຸ່ມທີ່ແຕກຕ່າງກັນແມ່ນລວມເຖິງຂອບເຂດລະດັບກວ້າງໃນດ້ານຄວາມບໍ່ຍຸດຕິທັມ, ການບໍ່ເຄົາລົບກັນ, ແລະພຶດຕິກຳຄວາມກ້າວຮ້າວຊຶ່ງສາມາດເປັນເຫດໃຫ້ເກີດອັນຕະລາຍທາງອາລົມ ແລະ ທາງຮ່າງກາຍ ແລະ ສົ່ງຜົນກະທົບໃນທາງລົບຕໍ່ ຄວາມສາມາດຂອງນັກຮຽນໃນການຮຽນຮູ້. ໃນການນີ້ ມີພະຍານໜຶ່ງຮ້ອຍສາມສິບຄົນ ມາສະແດງຄວາມຄິດເຫັນຂອງເຂົາເຈົ້າ, ແລະນອກຈາກນີ້ ທາງຄະນະກຳມາທິການຍັງໄດ້ຮັບລາຍງານເພີ່ມເຕີມ ທີ່ເປັນລາຍລັກອັກສອນອີກ 40 ສະບັບ. ພວກເຮົາໄດ້ເຮັດພາລະກິດນີ້ເນື່ອງຈາກວ່າ ການສິດສອນນັກຮຽນ ໃຫ້ສາມາດຮັບເອົາຄວາມຫຼາກຫຼາຍໄດ້ນັ້ນ ບໍ່ແມ່ນແຕ່ຄວາມຈຳເປັນທາງສັງຄົມ ແລະເສດຖະກິດເທົ່ານັ້ນ, ມັນຍັງແມ່ນຂໍ້ບັງຄັບທາງດ້ານສິລທັມອີກດ້ວຍ.

ການພິຈາລະນາຄະດີໄດ້ເຮັດໃຫ້ປາກົດເຖິງຄວາມເຊື່ອໝັ້ນຢ່າງເລິກຊຶ້ງຂອງບຸກຄົນຕ່າງໆ ທີ່ມາໃຫ້ການເປັນພະຍານ. ຄະນະກຳມາທິການໄດ້ຮຽນຮູ້ວ່າ ຄວາມຂັດແຍ້ງລະຫວ່າງກຸ່ມທີ່ແຕກຕ່າງກັນແມ່ນບັນຫາທົ່ວລະບົບໃນເຂດ ການສຶກສາຂອງຟິລາເດເຟຍ ຊຶ່ງຈຳເປັນຕ້ອງ ມີການແກ້ໄຂບັນຫາທົ່ວທັງລະບົບ. ຄວາມຂັດແຍ້ງ, ທັງວາຈາ ແລະ ທາງຮ່າງກາຍ, ໄດ້ເກີດຂຶ້ນຊ້ຳແລ້ວຊ້ຳອີກໃນຫຼາຍໂຮງຮຽນ. ຄຳໃຫ້ການໄດ້ເປີດເຜີຍໃຫ້ເຫັນວ່າ, ຫຼາຍຄັ້ງ, ທາງເຂດການສຶກສາບໍ່ໄດ້ເຮັດວຽກທີ່ພຽງພໍທີ່ຈະປ້ອງກັນ ແລະ ແກ້ໄຂບັນຫາຄວາມຂັດແຍ້ງດັ່ງກ່າວ ແລະ ການເຂົ້າເຖິງທາງດ້ານພາສາຊຶ່ງບໍ່ພຽງພໍນັ້ນ—ໃນດ້ານສິດທິທາງກົດໝາຍ—ເຮັດໃຫ້ສະຖານະການຮ້າຍແຮງຂຶ້ນ. ພວກເຮົາໄດ້ຟັງຈາກພະຍານຫຼັກຖານວ່າ ນະໂຍບາຍທີ່ເຂັ້ມງວດໃນການພັກຮຽນໂດຍອັດຕະໂນມັດ ຊຶ່ງທາງ ເຂດການສຶກສານຳໃຊ້ນັ້ນ ບໍ່ສາມາດຊ່ວຍບັນເທົາ ບັນຫາຄວາມຕຶງຄຽດໃນລະຫວ່າງກຸ່ມໄດ້. ເມື່ອໃດກໍຕາມ ທີ່ມີການວາງກົດລະບຽບວິໄນ, ທາງເຂດການສຶກສາຕ້ອງຮັບປະກັນວ່າ ລະບຽບວິໄນດັ່ງກ່າວນັ້ນເປັນໄປໃນທາງ ສ້າງສັນ ແລະ ພຽງພໍເໝາະສົມໃນການ ປະຕິບັດ ແລະ ບໍ່ແມ່ນແຕ່ເປັນການລົງໂທດແຕ່ພຽງຢ່າງດຽວ. ພວກເຮົາໄດ້ຮຽນຮູ້ວ່າ ວິທີການທີ່ມີປະສິດທິພາບແລະເປັນບວກ ເຊັ່ນ ການໄກ່ເກັ່ຽໃນກຸ່ມ, ການສະໜັບສະໜູນ ການປະພຶດທີ່ເປັນບວກ, ແລະ ຄວາມຍຸດຕິທັມ ເພື່ອການຟື້ນຟູ ແມ່ນບໍ່ພຽງພໍໃນການນຳໃຊ້ປະໂຫຍດ ຫຼື ດຳເນີນການປະຕິບັດ.

ເຖິງແນວນັ້ນ ນັກຮຽນຍັງໄດ້ເວົ້າເຖິງຄວາມພະຍາຍາມໃນທາງບວກ ແລະມີພະລັງ ຊຶ່ງເຂົາເຈົ້າໄດ້ປະກອບສ່ວນ, ດ້ວຍການຊ່ວຍເຫຼືອຈາກຜູ້ໃຫຍ່, ເພື່ອແກ້ໄຂບັນຫາຄວາມຂັດແຍ້ງຢ່າງສັນຕິ. ພວກເຮົາໄດ້ຍິນກ່ຽວກັບວ່າ ໃນໂຮງຮຽນຕ່າງໆ ບັນດາຜູ້ໃຫ້ຄວາມຮູ້ ແລະເຈົ້າໜ້າທີ່ໄດ້ພະຍາຍາມຢ່າງກະຕືລືລົ້ນທີ່ຈະສ້າງຂົວເຊື່ອມຕໍ່ ແລະ

ຮູບແບບການປະພຶດ ທີ່ມີຄວາມເຄົາລົບຕໍ່ກັນ. ພວກເຮົາໄດ້ເຫັນວ່າ ຮູບແບບຂອງໂຄງການຕ່າງໆ ທີ່ອີງໃສ່ຊຸມຊົນເປັນຫຼັກນັ້ນ ຊ່ວຍໃຫ້ໄວໜຸ່ມຈາກຄອບຄົວທີ່ມີພື້ນຖານຄວາມເປັນມາຕ່າງກັນ ສາມາດກ່ຽວພັນກັນຜ່ານຜົນປະໂຫຍດຮ່ວມກັນ.

ທັງໆ ທີ່ໄດ້ມີຄວາມພະຍາຍາມທີ່ເປັນບວກເຫຼົ່ານີ້ແລ້ວ, ກໍຍັງປາກົດວ່າ ມີຄວາມຂັດແຍ້ງລະຫວ່າງກຸ່ມທີ່ແຕກຕ່າງກັນ ຊຶ່ງບໍ່ສາມາດແກ້ໄຂໄດ້ ແຜ່ຂະຫຍາຍໄປທົ່ວ. ແຕ່ວ່າ ມັນແມ່ນຄວາມຫວັງອັນແຮງກ້າຂອງຄະນະກຳມາທິການທີ່ວ່າ ລາຍງານນີ້, ພ້ອມດ້ວຍຄຳແນະນຳໃນນັ້ນ, ຈະສາມາດກະຕຸ້ນຊຸກຍູ້ໃຫ້ທາງເຂດການສຶກສາ ດຳເນີນການແກ້ໄຂ, ຕິດຕາມ, ແລະປ້ອງກັນບັນຫາຄວາມຂັດແຍ້ງລະຫວ່າງກຸ່ມທີ່ແຕກຕ່າງກັນໂດຍໃຫ້ຄວາມສຳຄັນຢ່າງສູງ. ມັນຈຳເປັນທີ່ທາງເຂດການສຶກສາຈະຕ້ອງປະຕິບັດເພື່ອສ້າງບັນຍາກາດແຫ່ງການເຄົາລົບຊຶ່ງກັນແລະກັນ ແລະ ຄວາມອົດທົນອົດກັ້ນໃຫ້ທົ່ວທັງໂຮງຮຽນຂອງເມືອງ ເພື່ອແຜ່ຂະຫຍາຍຂອບເຂດຄວາມເປັນຫ່ວງຂອງພວກເຮົາ ໂດຍລວມເອົາຄວາມຫຼາກຫຼາຍຂອງປະຊາຊົນໄວໜຸ່ມຂອງຟີລາເດເຟັຍ.

## ການຄົ້ນພົບ

**ການຄົ້ນພົບທີ** 1

ຄວາມຂັດແຍ້ງລະຫວ່າງກຸ່ມທີ່ມີຄວາມແຕກຕ່າງກັນແມ່ນບັນຫາທີ່ແຜ່ຂະຫຍາຍໃນໂຮງຮຽນຣັຖໃນຟີລາເດເຟັຍ ຊຶ່ງເປັນການລົບກວນຂັດຂວາງຕໍ່ການຮຽນຮູ້ຂອງນັກຮຽນ.

**ການຄົ້ນພົບທີ** 2 ນະໂຍບາຍຕ່າງໆ ຂອງເຂດການສຶກສາບໍ່ສາມາດຈັດຫາຂອບເຂດວຽກງານທີ່ຊັດເຈນ ແລະຕໍ່ເນື່ອງ ເພື່ອປ້ອງກັນ ແລະແກ້ໄຂບັນຫາຄວາມຂັດແຍ້ງລະຫວ່າງກຸ່ມທີ່ແຕກຕ່າງກັນ, ແລະນະໂຍບາຍເຫຼົ່ານີ້ບໍ່ໄດ້ມີການດຳເນີນຢ່າງເປັນຮູບແບບ ແລະບໍ່ມີການສື່ສານກັນຢ່າງຊັດເຈນ.

**ການຄົ້ນພົບທີ** 3 ເຂດການສຶກສາໄດ້ເພິ່ງພາກັບນະໂຍບາຍການລົງວິໄນທີ່ເຂັ້ມງວດ, ແຕ່ນະໂຍບາຍນີ້ເຮັດໃຫ້ນັກຮຽນແຕກກັນ ແລະ ສົ່ງຜົນກະທົບທີ່ເປັນລົບຕໍ່ບັນຍາກາດໃນໂຮງຮຽນ. ເຂດການສຶກສາບໍ່ໄດ້ໃຊ້ປະໂຫຍດຢ່າງເຕັມສ່ວນໃນວິທີການທີ່ສ້າງສັນຫຼາຍຂຶ້ນ, ຊຶ່ງລວມເຖິງ ການສະໜັບສະໜູນຄວາມປະພຶດທີ່ເປັນບວກ, ການໄກ່ເກັ່ຍໃນກຸ່ມ, ແລະ ການນຳໃຊ້ວິທີການຍຸດຕິທັມເພື່ອຟື້ນຟູແກ້ໄຂ.

**ການຄົ້ນພົບທີ** 4 ນະໂຍບາຍຕ່າງໆ ທີ່ມີໃນປັດຈຸບັນ ແລະແຫຼ່ງຊ່ວຍເຫຼືອຕ່າງໆ ທີ່ກ່ຽວຂ້ອງກັບການເຂົ້າເຖິງດ້ານພາສາ ແມ່ນບໍ່ແຜ່ຂະຫຍາຍ ຢ່າງກວ້າງຂວາງຕໍ່ສາທາລະນະ ແລະບໍ່ພຽງພໍທີ່ຈະຕອບສະໜອງຕໍ່ຄວາມຕ້ອງການຂອງນັກຮຽນທັງໝົດ ແລະຄອບຄົວ ຊຶ່ງມີສິດຕາມກົດໝາຍທີ່ຈະໄດ້ຮັບການບໍລິການດ້ານການເຂົ້າເຖິງພາສາ.

**ການຄົ້ນພົບທີ** 5

ບັນດານັກຮຽນແມ່ນຕົວແທນສຳລັບການປ່ຽນແປງໃນການຫຼຸດຜ່ອນຄວາມຂັດແຍ້ງລະຫວ່າງກຸ່ມທີ່ແຕກຕ່າງກັນ ແລະສົ່ງເສີມຄວາມເປັນອັນໜຶ່ງອັນດຽວກັນຂອງກຸ່ມຕ່າງໆ ທີ່ແຕກຕ່າງກັນ.

**ການຄົ້ນພົບທີ** 6 ຜູ້ໃຫ້ຄວາມຮູ້ ແລະກຸ່ມຊຸມຊົນຕ່າງໆ ສ້າງຂົວເຊື່ອມຕໍ່ລະຫວ່າງກຸ່ມໄວໜຸ່ມຕ່າງໆ ທີ່ແຕກຕ່າງກັນ ແລະສົ່ງເສີມສ້າງສະພາບແວດລ້ອມທີ່ດີໃນໂຮງຮຽນ.

**ການຄົ້ນພົບທີ 7** ພະຍານຕ່າງໆ ໄດ້ໃຫ້ຕົວຢ່າງທີ່ກະຕຸ້ນຄວາມສົນໃຈກ່ຽວກັບວິທີການເຂົ້າເຖິງ ເພື່ອປ້ອງກັນຄວາມຂັດແຍ້ງລະຫວ່າງກຸ່ມ ທີ່ແຕກຕ່າງກັນ ໃນໂຮງຮຽນຂອງຟີລາເດເຟຍ.

**ການຄົ້ນພົບທີ 8** ພະຍານຕ່າງໆ ໄດ້ໃຫ້ຄຳແນະນຳທີ່ສຳຄັນສຳລັບການແກ້ໄຂບັນຫາຄວາມຂັດແຍ້ງ ແລະກ່າວເຖິງການລ່ວງລະເມີດ ທີ່ເກີດຈາກຄວາມມີອະຄະຕິ.